BOL.ODX
ຂ່າວ news
ສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງ ອຸດົມໄຊ
Tel: 081 260009; 212549. Fax: 081 212551
Website: www.bol.gov.la/Oudomxay/

# ສຳເລັດ ກອງປະຊຸມວ່າດ້ວຍການເຄື່ອນຍ້າຍເງິນສົດຜ່ານດ່ານພາສີສາກົນບໍ່ເຕັ່ນ



ໃນຕອນບ່າຍ ຂອງວັນທີ 17 ມີນາ 2021 ທີ່ຫ້ອງປະຊຸມຊັ້ນ II ຂອງໂຮງແຮມຈິງຫລານ ເຂດເສດຖະກິດພິເສດ ບໍເຕ່ນ ແດນງາມ ແຂວງ ຫຼວງນໍ້າທາ ໄດ້ເປີດກອງປະຊຸມປຶກສາຫາລືວຽກງານການເຄື່ອນຍ້າຍເງິນສົດຜ່ານດ່ານພາສີບໍເຕ່ນຂຶ້ນ ພາຍໃຕ້ການເປັນປະທານຂອງ ທ່ານ ໂພຕະມີ ພຸດທະວົງ ອຳນວຍການຫົວໜ້າ ສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງ ອຸດົມໄຊ ແລະ ມີບັນດາພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຄື: ກອງຄຸ້ມຄອງພາສີ I, ເຈົ້າໜ້າທີ່ດ່ານພາສີສາກົນບໍ່ເຕ່ນ, ເຈົ້າໜ້າທີ່ຕາຫຼວດ ຕ.ມ, ຄະນະຄຸ້ມຄອງເຂດເສດຖະກິດພິເສດບໍ່ເຕ່ນແດນງາມ, ບັນດາຫົວໜ້າ ສາຂາ, ໜ່ວຍບໍລິການ ທະນາຄານທຸລະກິດລັດ-ເອກະຊົນ ເຂົ້າຮ່ວມທັງໝົດ 21 ທ່ານ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນ ເພື່ອສະຫຼຸບລາຍງານສະພາບການເຄື່ອນໄຫວ ວຽກງານການເຄື່ອນຍ້າຍເງິນສົດ ຜ່ານດ່ານພາສີສາກົນບໍ່ເຕ່ນ ຂອງບັນດາ ສາຂາ, ໜ່ວຍບໍລິການທະນາຄານທຸລະກິດລັດ-ເອກະຊົນ ທີ່ຕັ້ງຢູ່ໃນເຂດເສດຖະກິດພິເສດ ບໍເຕ່ນ ແດນງາມ ແຂວງ ຫຼວງນໍ້າທາ ໃຫ້ມີຄວາມເປັນເອກະພາບກັນ, ສາມາດເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ, ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະພາກສ່ວນ.

ໃນກອງປະຊຸມໄດ້ຮັບຟັງການຜ່ານບົດສະຫຼຸບໂດຍຫຍໍ້ ວຽກງານການເຄື່ອນຍ້າຍເງິນສົດ ເຂົ້າ-ອອກ ຊາຍແດນໃນໄລຍະຫຼາຍປີຜ່ານມາຂອງ ສາຂາ, ໜ່ວຍບໍລິການທະນາຄານທຸລະກິດລັດ-ເອກະຊົນ, ຊຶ່ງບົດສະຫຼຸບໄດ້ຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້. ຫຼັງຈາກນັ້ນ, ບັນດາສາຂາ, ໜ່ວຍບໍລິການທະນາຄານທຸລະກິດລັດ-ເອກະຊົນ, ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງໄດ້ປະກອບຄຳຄິດເຫັນ ແລະ ຍົກບັນຫາທີ່ຍັງເຫັນວ່າບໍ່ທັນສອດຄ່ອງກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ມາປຶກສາຫາລືແກ້ໄຂຮ່ວມກັນ ເພື່ອເຮັດໃຫ້ວຽກງານການເຄື່ອນຍ້າຍເງິນສົດມີຄວາມຄ່ອງຕົວ ແລະ ຖືກຕ້ອງຕາມລະບຽບການ.



ໃນຕອນທ້າຍ ປະທານກອງປະຊຸມໄດ້ເນັ້ນໜັກພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການໃນການຕິດຕາມການເຄື່ອນຍ້າຍເງິນສົດ ເຂົ້າ-ອອກ ຕ່າງປະເທດ ແລະ ເຂົ້າ-ອອກ ດ່ານພາສີແຕ່ລະຄັ້ງ ໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014, ລະບຽບກົດໝາຍຂອງບັນດາພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງເງິນຕາຕ່າງປະເທດເຂົ້າສູ່ລະບົບ, ຕ້ານ, ສະກັດກັ້ນການຟອກເງິນ ອຳນວຍຄວາມສະດວກດ້ານການຈໍລະຈອນສິນຄ້າ, ເງິນຕາ, ການຄ້າ ແລະ ການລົງທຶນໃນຂົງເຂດ 04 ແຂວງພາກເໜືອ ໃຫ້ສອດຄ່ອງກັບລະບຽບກົດໝາຍແຫ່ງ ສປປ ລາວ.

**# ຂ່າວ ແລະ ພາບ ໂດຍ:**

**ພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ**

**“ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນກີບລາວ”**